ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ
ສຳນັກງານ ຄຄຊ
ຫ້ອງການ
ເລກທີ 936
ວັນທີ 10/9/2015
ໂທລະສັບ 021 217770

ເລກທີ: 34 /ທຫ

ນະຄອນຫຼວງວຽງຈັນ, ວັນທີ: 31 ສິງຫາ 2015

# ລາຍງານການເຄື່ອນໄຫວປະຈຳອາທິດ
# ທີ 17/08/2015 ຫາ 21/08/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
# ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣແຂງຄ່າຂຶ້ນ ແຕ່ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນ: ນັກລົງທຶນເລີ່ມເຫັນທິດທາງການຟື້ນຕົວທາງດ້ານເສດຖະກິດຂອງຂົງເຂດເອີຣົບ ພາຍຫຼັງຕົວເລກດຸນການຄ້າເກີນດຸນເປັນ 26,4 ຕື້ເອີໂຣ ໃນເດືອນ 6/2015 ຈາກເກີນດຸນ 18,8 ຕື້ເອີໂຣ ໃນເດືອນຜ່ານມາ ບວກກັບບັນຫາຄວາມບໍ່ສະຫງົບທີ່ເກີດຂຶ້ນໃນປະເທດໄທ ແລະ ຕົວເລກການວ່າງງານຂອງສະຫະລັດຍັງຄົງທີ່ໃນລະດັບ 5,3% ໃນເດືອນ 7/2015.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 11/08/2015 | ອາທິດນີ້ 18/08/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1003 | 1,1074 | -0,64% |
| ໂດລາ/ເຢນ | 124,73 | 124,37 | 0,29% |
| ໂດລາ/ບາດ | 35,30 | 35,55 | -0,72% |
| ໂດລາ/ເປໂຊ | 45,91 | 46,33 | -0,89% |
| ໂດລາ/ຣູເປັຍ | 13.577,33 | 13.828,00 | -1,81% |
| ໂດລາ/ໂດລາສິງກະໂປ | 1,3960 | 1,4057 | -0,69% |
| ໂດລາ/ຢວນ | 6,3043 | 6,3965 | -1,44% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 6,86% ຈາກ 45,33 ໂດລາ/ບາເຣວ ມາເປັນ 42,22 ໂດລາ/ບາເຣວ ຍ້ອນນັກລົງທຶນຍັງບໍ່ໝັ້ນໃຈ ກ່ຽວກັບການລາຍງານລວມຍອດຜະລິດຕະພັນພາຍໃນປະເທດ (GDP) ໄຕມາດ 2/2015 ຂອງຍີ່ປຸ່ນທີ່ຕົກໂຕລົງເປັນເທື່ອທຳອິດໃນຮອບ 3 ໄຕມາດ ບວກກັບປັດໄຈການສະໜອງນ້ຳມັນຫຼາຍກວ່າຄວາມຕ້ອງການ.

ລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 1,09% ຈາກ 1.106,51 ໂດລາ/ອອນ ມາເປັນ 1.118,62 ໂດລາ/ອອນ ຍ້ອນນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳເພີ່ມຂຶ້ນ ເພື່ອເກັງກຳໄລ ແລະ ປ້ອງກັນຄວາມສ່ຽງຈາກຄວາມຜັນຜວນຂອງເສດຖະກິດໂລກບວກກັບການອ່ອນຄ່າລົງຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

2. ສະພາບເສດຖະກິດເງິນຕາພາຍໃນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,20% ສຳລັບອັດຕາ ທຫລ ແລະ ແຂງຄ່າຂຶ້ນ 0,07% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,79% ສຳລັບອັດຕາ ທຫລ ແລະ ແຂງຄ່າຂຶ້ນ 0,65% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 1,24% ສຳລັບອັດຕາ ທຫລ ແລະ ອ່ອນຄ່າລົງ 1,05% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 5,25% ສຳລັບອັດຕາ ທຫລ ແລະ ແຂງຄ່າຂຶ້ນ 6,14% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 11/08/2015 | | | ອາທິດນີ້ 18/08/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະນາຄານ[1] | | | | | | | | | |
| ໂດລາ | 8.181,40 | 8.210,11 | 8.196,18 | 8.170,72 | 8.197,70 | 8.179,50 | 0,131% | 0,15% | 0,20% |
| ບາດ | 236,57 | 237,59 | 237,26 | 234,48 | 235,59 | 235,40 | 0,89% | 0,85% | 0,79% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.185,38 | 8.220,47 | 8.202,93 | 8.183,58 | 8.210,87 | 8.197,23 | 0,02% | 0,12% | 0,07% |
| ບາດ | 238,06 | 239,10 | 238,58 | 236,53 | 237,57 | 237,05 | 0,65% | 0,65% | 0,65% |
| ຜິດດ່ຽງອັດຕາ ທຫລ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,05% | 0,13% | 0,08% | 0,16% | 0,16% | 0,22% | | | |
| ບາດ | 0,63% | 0,64% | 0,55% | 0,87% | 0,84% | 0,70% | | | |

2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 1,00% ທຽບໃສ່ວັນທີ 14/08/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 40,16%;
- ປະລິມານເງິນ M2 ຫຼຸດລົງ 0,01% ເມື່ອທຽບໃສ່ວັນທີ 14/08/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 20,74%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 17/08/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 41,44 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 104,63 ລ້ານໂດລາ ແລະ ຂາຍໂດລາໄດ້ 63,19 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 2.230,05 ລ້ານບາດ (ໃນນີ້ ຊື້ບາດໄດ້ 840,45 ລ້ານບາດ ແລະ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ຂາຍບາດໄດ້ 3.070,50 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ເພີ່ມຂຶ້ນ 31,25% ແລະ ເພີ່ມຂຶ້ນ 60,11% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 2,28 ລ້ານໂດລາ ແລະ ເງິນບາດມີຈໍານວນ 96,89 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 35,71 ລ້ານໂດລາ ແລະ ຂາຍບາດສຸດທິ ຈໍານວນ 37,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈໍານວນ 15,29 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈໍານວນ 1.956,36 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 11/08/2015 | | ອາທິດທີ 17/08/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 21,76 | 284,61 | 22,99 | 337,54 | 5,63% | 18,60% |
| - ທ/ຄທຸລະກິດອື່ນໆ | 51,58 | 272,91 | 81,64 | 502,92 | 58,27% | 84,28% |
| ລວມຊື້: | **73,34** | **557,52** | **104,63** | **840,45** | **42,65%** | **50,75%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 29,10 | 229,88 | 31,67 | 232,57 | 8,82% | 1,17% |
| - ທ/ຄທຸລະກິດອື່ນໆ | 25,42 | 1.655,31 | 31,53 | 2.837,93 | 24,03% | 71,44% |
| ລວມຂາຍ: | **54,52** | **1.885,19** | **63,19** | **3.070,50** | **15,91%** | **62,87%** |
| ຊື້-ຂາຍສຸດທິ ທທກ | **18,83** | **-1.327,67** | **41,44** | **-2.230,05** | **120,09%** | **67,97%** |
| ຜິດດ່ຽງ ຊື້-ຂາຍ | 25,67 | -238,14 | 39,60 | -265,34 | 139,39% | -272,17% |
| ມູນຄ່າການຊື້-ຂາຍ | **127,86** | **2.442,72** | **167,82** | **3.910,95** | **31,25%** | **60,11%** |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,00 | 73,00 | 2,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 32,88 | 230,00 | 37,71 | 37,00 | | |
| ຊື້-ຂາຍສຸດທິ ທຫລ | **-32,88** | **-157,00** | **-35,71** | **-37,00** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **5,85** | **102,55** | **2,28** | **96,89** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,01 | 2.722,77 | 40,42 | 1.956,36 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 68,84 | 0,00 | 55,71 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-68,83** | **2.722,77** | **-15,29** | **1.956,36** | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈໍາເດືອນ 08/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,09% ຫຼຸດລົງ 0,08% ຈາກ 1,17% ໃນເດືອນ 07/2015 ຍ້ອນລາຄານໍ້າມັນພາຍໃນປະເທດຄາດວ່າຈະຫຼຸດລົງ ແລະ ໝວດອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ ເພີ່ມຂຶ້ນໃນຈັງວະທີ່ຊ້າລົງ ທຽບໃສ່ເດືອນຜ່ານມາ.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 141,7 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງຫຼຸດລົງ 22,30% ທຽບໃສ່ອາທິດຜ່ານມາ.

### 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 939 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 30,41% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 1.385,21 ຕື້ກີບ ຫຼຸດລົງ 13,45% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (14-20/08/2015) ມີຈຳນວນ 1.559 ຄັ້ງ ໂດຍມີມູນຄ່າ 431,46 ຕື້ກີບ ຫຼຸດລົງ 12,75% ຊຶ່ງທະນາຄານພັດທະນາລາວ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 391 ຄັ້ງ.

### 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.337,48 ຈຸດ ເພີ່ມຂຶ້ນ 1,06% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 916.066 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 6,21 ຕື້ກີບ ເພີ່ມຂຶ້ນ 191,57% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 78,86% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.853 ກີບ/ຮຸ້ນ ຫຼຸດລົງ 48 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 49.917 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 292,15 ລ້ານກີບ ຫຼຸດລົງ 77,45% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 45,57% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,77%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.866 ກີບ/ຮຸ້ນ ຫຼຸດລົງ 81 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 859.935 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,90 ຕື້ກີບ ເພີ່ມຂຶ້ນ 68,59% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 78,93% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,28%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດຢູ່ທີ່ 8.000 ກີບ/ຮຸ້ນ ໂດຍໃນອາທິດນີ້ ແມ່ນບໍ່ມີການຈັບຄູ່ຊື້-ຂາຍ ແລະ ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.901 ກີບ/ຮຸ້ນ ຫຼຸດລົງ 1 ກີບ/ຮຸ້ນ ໂດຍໃນອາທິດນີ້ ແມ່ນມີການຈັບຄູ່ຊື້-ຂາຍພຽງແຕ່ວັນດຽວ ຊຶ່ງມີປະລິມານຊື້-ຂາຍທັງໝົດ 6.214 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 18,02 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 91% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,67%[5].

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມຝຶກອົບຮົມ ໃນຫົວຂໍ້: "ການບັນຊີວິສາຫະກິດ, ທຸລະກຳການເງິນ ແລະ ເຄື່ອງມືທາງການເງິນ ຂອງທະນາຄານທຸລະກິດ" ທີ່ສະຖາບັນການທະນາຄານ;
- ສຳເລັດການຈັດກອງປະຊຸມເຜີຍແຜ່ເງື່ອນໄຂ ຂອງການເຂົ້າເຖິງແຫຼ່ງທຶນ ແລະ ສຳມະນາກ່ຽວກັບແບບຟອມຂອງກອງທຶນສົ່ງເສີມການເຂົ້າເຖິງການບໍລິການການເງິນທີ່ຫລາກຫຼາຍ ແລະ ທົ່ວເຖິງ (FIF) ທີ່ແຂວງຫຼວງພະບາງ;
- ສຳເລັດການຕ້ອນຮັບ: ❶ຕ້ອນຮັບຕົວແທນຈາກສະຖາບັນ Chartered Financial Analysts : CFA ທີ່ເດີນທາງມາພົບປະ ແລະ ເຮັດວຽກຮ່ວມກັບຄະນະ ທຫລ, ❷ຕ້ອນຮັບທ່ານ Jonathan Dunn, ຜູ້ຕາງໜ້າຫ້ອງການ IMF ປະຈຳ ສປປ ລາວ ແລະ

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

ສສ. ຫວຽດນາມ ໃນການເຂົ້າຢ້ຽມຂໍ່ານັບ ທ່ານ ຜູ້ວ່າການ ທຫລ ແລະ ຮອງຜູ້ວ່າການ ທຫລ ໃນໂອກາດເຂົ້າຮັບໜ້າທີ່ຕໍາແໜ່ງໃໝ່;

- ສໍາເລັດການໄປຖອດຖອນບົດຮຽນ ວຽກງານຄຸ້ມຄອງການບໍລິຫານງານຂອງທະນາຄານກາງ ຢູ່ສາຂາທະນາຄານແຫ່ງລັດ ຫວຽດນາມ ທີ່ແຂວງ ແທງຫົວ;
- ສໍາເລັດການສ້າງ Phase2 ຂອງລະບົບ STR Online.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ :</u>

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ກະກຽມການເຂົ້າຮ່ວມກອງປະຊຸມ AFI Forum 2015 ທີ່ປະເທດ Mozambique ຂອງຄະນະກົມ;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2.000 ກີບໃໝ່ ງວດ 5 ຊຸດ 2 ຈໍານວນ 30 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການ ບາເຊວ 2, ❷ຄົ້ນຄວ້າຮ່າງລະບຽບກ່ຽວກັບການຢຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ມະຕິ 1267,1373 ຂອງສະພາຄວາມໝັ້ນຄົງ ສປຊ, ❸ຄົ້ນຄວ້າລະບຽບກ່ຽວກັບການປັບໃໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❹ຄົ້ນຄວ້າກ່ຽວກັບ ການສ້າງລະບົບຕ້ານການຟອກເງິນທີ່ທັນສະໄໝໂດຍສະເພາະແມ່ນລະບົບ IT, ❺ຄົ້ນຄວ້າຮ່າງດໍາລັດວ່າດ້ວຍ ປົກປ້ອງຜູ້ບໍລິໂພກທາງການເງິນ, ❻ຄົ້ນຄວ້າລະບຽບວ່າດ້ວຍ Financial Service provider ກ່ຽວກັບສະຖາບັນການເງິນ;
- ສືບຕໍ່ຈັດຕັ້ງປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ສືບຕໍ່ການຝຶກຊ້ອມໃຫ້ພ້ອມພຽງກັນຂອງກ້ອນກໍາລັງ ທີ່ສະຖາບັນການທະນາຄານ ເພື່ອກະກຽມໃນພິທີສະເຫຼີມສະຫຼອງ 2 ວັນປະຫວັດສາດປີ 2015 ໃນວັນທີ 2 ທັນວາ 2015;
- ສືບຕໍ່ຮ່າງເກັບກ່ຽວຜົນງານລວມ ຂອງ ທຫລ ໄລຍະ 10 ປີ (2005-2015) ເພື່ອຂໍການຍ້ອງຍໍ ເນື່ອງໃນໂອກາດສະເຫຼີມສະຫຼອງ 2 ວັນປະຫວັດສາດ ປີ 2015.

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ພາສີ ພິມມະກອນ